# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 21 ພຶສພາ 2017 ( 5-21-2017 )

## ຊີວິດໃນຊຸມຊົນ

*ທ່ານມັກຫຍັງຫຼາຍທີ່ສຸດໃນຊຸມຊົນຂອງທ່ານ ?*

**ຈຸດສຳຄັນໃນບົດຮຽນ**: ການຮັກພຣະເຢຊູໝາຍເຖິງການຊ່ອຍຜູ້ທີ່ຂັດສົນດ້ວຍຕົວທ່ານເອງ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ເມືອງຂອງທ່ານໄດ້ອອກລາຍຊື່ໄວ້ບໍ່? ເຊັ່ນ: ການໂຄສະນາ ບໍຣິສັດ ແລະອອກລາຍຊື່ທາງເວບໄຊຂອງຕົວເມືອງທີ່ໜ້າຢູ່, ຄຸ້ມທີ່ດີທີ່ສຸດເໝາະທີ່ຈະເອົາເດັກນ້ອຍມາຢູ່, ເມືອງທຸຣະກິດເປັນມິດທີ່ດີທີ່ສຸດ, ແລະ ຕໍ່ໆໄປ. ແຕ່ລະຊະນິດແຕກຕ່າງກັນໄປຕາມລາຍຊື່, ແລະລາຍການເລືອກຈະຊ່ອຍການຕັດສິນໃຈຢ່າງດີຢ້ຽມໂດຍສະເພາະຖ້າຊຸມຊົນຂອງທ່ານບໍ່ໄດ້ຕັດອອກ!

ຄຳນຶ່ງທີ່ສາມາດນຳມາໃຊ້ເພື່ອຊີ້ບອກເຖິງພື້ນຖານຂອງລາຍຊື່ແມ່ນ "ການເບິ່ງແຍງ" (treatment). ພວກເຮົາເຮັດນຳນັກທ່ອງທ່ຽວ ແລະແຂກເມືອງທີ່ມາຢາມບ້ານເມືອງຂອງເຮົາ? ບັນດາຄຣູ ແລະຄນະບໍຣິຫານເບິ່ງແຍງລູກຂອງເຮົາຢ່າງໃດ? ຣັຖບານທ້ອງຖິ່ນເບິ່ງແຍງທຸຣະກິດໃນເຂດນັ້ນດີສໍ່າໃດ?

ໃນທັນທີທັນໃດ, ພວກເຮົາກໍສາມາດບົ່ງບອກໄດ້ຫຼາຍຢ່າງ ກ່ຽວກັບຊຸມຊົນ ດ້ວຍຮູ້ວ່າເຂົາເບິ່ງແຍງຜູ້ອື່ນຢ່າງໃດ. ໃນທາງຄ້າຍຄືກັນ, ຜູ້ຕິດຕາມພຣະເຢຊູ ເປີດເຜີຍໃຫ້ເຫັນຫຼາຍຢ່າງກ່ຽວລັກສະນະຂອງເຮົາໃນທາງທີ່ເຮົາເບິ່ງແຍງຄົນອື່ນ. ຍ້ອນວ່າການທີ່ເຮົາເບິ່ງເບິ່ງຜູ້ອື່ນນັ້ນຄື: ພວກເຮົາຮັກ ແລະຕອບສນອງຕໍ່ຄວາມຕ້ອງການຂອງເຂົາ ມັນກ່ຽວຂ້ອງກັບຄວາມຮັກຂອງເຮົາທີ່ມີຕໍ່ພຣະເຈົ້າ ແລະກ່ຽວຂ້ອງກັບຄວາມສັມພັນຂອງເຮົາກັບພຣະອົງ.

ຖ້າພວກເຮົາເບິ່ງພຣະທັມມັດທາຍ, ພວກເຮົາຈະພົບຂ່າວປະເສີດທີ່ຊົງຣິດຈາກພຣະເຢຊູ ເຖິງຄຸນສົມບັດຂອງເຮົາຖານະສາວົກຂອງພຣະອົງ ເຮົາຄວນດຳຣົງຊີວິດໃນຊຸມຊົນແບບໃດ.

**ພຣະຄັມພີກ່າວວ່າແນວໃດ** : ( ເບິ່ງຕາມຂໍ້ 1, ແລະ 2 )

### ການສຶກສາພຣະຄັມພີ

**1. <u>ມັດທາຍ 25:34-36</u>** :

*34 ເມື່ອນັ້ນ ພຣະມະຫາກະສັດຈະຊົງກ່າວແກ່ບັນດາຜູ້ທີ່ຢູ່ທາງພຣະຫັດຂວາຂອງພຣະອົງວ່າ 'ພວກທ່ານທ່ານທີ່ໄດ້ຮັບພຣະພອນຈາກພຣະບິດາຂອງເຮົາເອີຍ ຈົ່ງມາຮັບເອົາຣາຊອານາຈັກ ຊຶ່ງໄດ້ຊົງຈັດຕຽມໄວ້ສຳລັບທ່ານຕັ້ງແຕ່ຕົ້ນເດີມໂລກ. 35 ເພາະວ່າເມື່ອເຮົາຢາກເຂົ້າ ພວກທ່ານກໍໃຫ້ເຮົາກິນ ເຮົາຫິວນໍ້າພວກທ່ານກໍໃຫ້ເຮົາດື່ມ ເຮົາເປັນແຂກບ້ານ ພວກທ່ານກໍໄດ້ຕ້ອນຮັບເຮົາໄວ້. 36 ເຮົາເປືອຍຕົວ ພວກທ່ານກໍໄດ້ເອົາເຄື່ອງມາໃຫ້ເຮົານຸ່ງຫົ່ມ ເຮົາເຈັບປ່ວຍພວກທ່ານກໍໄດ້ມາຢ້ຽມຢາມເຮົາ ເຮົາຢູ່ໃນຄຸກພວກທ່ານກໍໄດ້ມາຫາ.*

| |
|---|
| ***ມີສະພາບການຍຸກໃໝ່ແນວໃດເຂົ້າມາໃນຄວາມຄິດຂອງທ່ານໃນເວລາທ່ານອ່ານຂໍ້ພຣະຄັມພີເຫຼົ່ານີ້ ?*** |

ເພື່ອຈະຊ່ອຍເຮົາໃຫ້ດໍາລົງຊີວິດຕາມລັກສະນະຂອງເຮົາໃນຖານະລູກສິດຂອງພຣະອົງ, ພຣະເຢຊູ ໄດ້ເລົ່າເຣື່ອງຄໍາອຸປມາທີ່ຈະພາເຮົາໄປເຖິງຕອນຈົບຂອງປວັດສາດ. ມັນເປັນພາບການສະເດັດກັບມາຄັ້ງທີສອງຂອງພຣະອົງ, ກັບຄົນທຸກຊາດເຕົ້າໂຮມຢູ່ຕໍ່ໜ້າພຣະບັນລັງຂອງພຣະອົງ (ເບິ່ງ ມທ 25:31-32).

ໃນຄໍາອຸປມາ ພຣະມະຫາກະສັດແຍກໄພ່ພົນຂອງພຣະອົງເປັນສອງກຸ່ມ. ພຣະອົງເຮັດເໝືອນດັ່ງ "ຜູ້ລ້ຽງແກະແຍກຝູງແກະອອກຈາກຝູງແບ້" (ຂໍ້ 32). ຝູງແກະມີຄ່າສູງໃນສມັຍນັ້ນຍ້ອນຂົນຂອງພວກມັນ . ໃນຂນະທີ່ເລົ່າເຣື່ອງຢູ່ນັ້ນ, ພຣະເຢຊູກ່າວວ່າ ແກະຝູງນີ້ເປັນສັດທີ່ມີຣາຄສູງ ຖືກຈັດໃຫ້ຢູ່ເບື້ອງພຣະຫັດຂວາຂອງພຣະຫາກະສັດ, ເປັນເຄື່ອງໝາຍອັນມີກຽດ.

ພຣະເຢຊູອອກຄໍາເຊື້ອເຊີນ "ແກະ" ຝູງນີ້ຍ້ອນການປະພຶດຂອງເຂົາຕໍ່ພຣະອົງແນວໃດ. ໂດຍສະເພາະ, ໄດ້ຕອບສນອງຄວາມຕ້ອງການຂອງພຣະອົງ ຈາກຄວາມສົງສານ ແລະຄວາມເມດຕາຂອງເຂົາເອງ. ພຣະອົງໄດ້ເລົ່າລາຍການຄວາມຕ້ອງການເຫຼົ່ານີ້, ດັ່ງຕໍ່ລົງໄປນີ້:

- **ຜູ້ຫິວເຂົ້າ ແລະ ຫິວນໍ້າ.** ນໍ້າອາດຈະຫາໄດ້ຍາກໃນເຂດນັ້ນ, ໂດຍສະເພາະປາຍຣະດູແລ້ງ ແລະ ຕົ້ນຣະດູໃບໄມ້ຫຼົ່ນ. ການແບ່ງປັນເຄື່ອງຂອງຣາຄາແພງເຫຼົ່ານີ້ອາດເປັນການສະແດງຄວາມຮັກອັນໃຫຍ່.
- **ຄົນແປກໜ້າ.** ໃນສມັຍພຣະເຢຊູ ເວລາຄົນແປກໜ້າບໍ່ແມ່ນຄົນທ້ອງຖິ່ນມາໃນບ້ານເມືອງ, ໄດ້ເຂົ້າມາໂດຍບໍ່ມີງານທໍາ ຫຼືໝາຍເຖິງ ຊ່ອຍຕົນເອງບໍ່ໄດ້. ສະພາບນີ້,ຄົນແປກໜ້າຖືກມອງດ້ວຍຄວາມສົງສັຍ, ແລະເຂົາເຈົ້າມັກໄດ້ຮັບການຂົ່ມເຫງຢ່າງໂຫດຮ້າຍ. ແຕ່ສັງເກດເບິ່ງວ່າສິ່ງທີ່ "ຝູງແກະ" ໄດ້ເຮັດຕໍ່ຄົນແປກໜ້າແບບໃດ: "ພວກທ່ານໄດ້ຕ້ອນຮັບເຮົາໄວ້." ການຕ້ອນຮັບຈັ່ງແມ່ນດີ! ນັ້ນມັນມີຄ່າຍິ່ງກວ່າການເອົາເງິນຈໍານວນໜ້ອຍທານໃຫ້ແລ້ວກໍຍ່າງກາຍໄປ; ແຕ່ມັນແມ່ນການທຸ້ມເທເວລາ, ເຫື່ອແຮງ ແລະ ຄວາມຮັກ ໃຫ້ເຂົາເຈົ້າ.
- **ການເປືອຍກາຍ.** ຖ້ອຍຄໍານີ້ມັກໝາຍເຖິງບຸກຄົນທີ່ນຸ່ງແຕ່ຊຸດຊັ້ນໃນ. ການຂາດເຄື່ອງນຸ່ງທີ່ຈໍາເປັນໃນບາງວັທນະທັມມັກຈະໄດ້ຮັບຄວາມອັບອາຍເຈັບປວດ ທັງຮ່າງກາຍແລະຄວາມຮູ້ສຶກ.
- **ການເຈັບປ່ວຍ.** ຄົນບໍ່ມີ "ວັນລາປ່ວຍ" (sick day)ໃນວັທນະທັມນີ້. ເຫດສະນັ້ນ, ຄວາມເຈັບປ່ວຍໝາຍເຖິງຂາດຈາກສິ່ງຂອງທີ່ຈໍາເປັນປະຈໍາວັນ. ການຢ້ຽມຢາມດູແລຍ່ອມເກີດຜົນດີ, ຕລອດຮອດການຊ່ອຍຊີວິດ.
- **ໃນຄຸກ.** ແມ່ນແຕ່ໃນສມັຍນີ້, ຜູ້ທີ່ຖືກຄຸມຂັງບໍ່ມີລາຍໄດ້, ສະນັ້ນ, ບໍ່ມີທາງທີ່ເຂົາຈະລ້ຽງຕົນເອງແລະຄອບຄົວໄດ້. ນັກໂທດໃນສັຕວັດທີນຶ່ງຍິ່ງຮ້າຍແຮງກວ່າດຽວນີ້, ເພາະຄຸກບໍ່ໄດ້ອໍານວຍສຸຂພາບດີແກ່ຜູ້ອາສັຍ ເຖິງວ່າຍັງມີຊີວິດຢູ່; ຜູ້ຖືກຄຸມຂັງກໍຍັງໄດ້ເພິ່ງພາອາສັຍການຊ່ອຍເຫຼືອ ແລະການຕ້ອນຮັບຈາກຄົນອື່ນໆ.

ມີສິ່ງທີ່ໜ້າສົນໃຈຫຼັງກ່ຽວກັບລາຍຊື່ຄວາມຕ້ອງການເຫຼົ່ານີ້ ແມ່ນຢູ່ບ່ອນວ່າມີໃຜສາມາດຕອບສນອງຕໍ່ສິ່ງເຫຼົ່ານີ້. ບໍ່ຈໍາເປັນຕ້ອງມີປະສົບການ ຫຼື ການສຶກສາເພີ້ມ ເພື່ອລ້ຽງດູຜູ້ໃດຜູ້ນຶ່ງທີ່ຫິວ, ເອົາເຄື່ອງນຸ່ງຫົ່ມໃຫ້ຄົນເປືອຍກາຍ, ເບິ່ງແຍງຄົນເຈັບປ່ວຍ, ແລະຊ່ອຍເຫຼືອຄົນໃນຄຸກ.

ສັງຄົມຂອງພວກເຮົາມີມຸມມອງຕ່າງກັນ ໃນການຈັດການກັບຄວາມຕ້ອງການເຊັ່ນນີ້, ນັບແຕ່ຕັ້ງການຍື່ນມືຂອງຣັຖບານ, ຫາການສົງເຄາະຕ່າງໆ, ຮອດການຮັບໃຊ້ຂອງໂບດ. ບໍ່ມີເຫດຜົນທີ່ຈະເມີນເສີຍຕໍ່ການຊ່ອຍເຫຼືອພວກນີ້. ແລ້ວ ພວກເຮົາຍັງຕ້ອງເອົາໃຈໃສ່ໃກ້ຊິດເພື່ອໃຫ້ສອດຄ່ອງກັບຄໍາເວົ້າຂອງພຣະເຢຊູ: "ເຮົາເປັນແຂກບ້ານ ພວກທ່ານກໍໄດ້ຕ້ອນຮັບເຮົາໄວ້ " (ກ່າວຍໍ້າ). ຝູງແກະໃນຄໍາອຸປມາຂອງພຣະເຢຊູບໍ່ພຽງແຕ່ໃຫ້ເງິນ ຫຼື ຊ່ອຍເຫຼືອຢູ່ໄກໆ; ເຂົາເຈົ້າຕ້ອງມີການເຂົ້າຮ່ວມ.

ພວກເຮົາຖືກຫຸ້ມລ້ອມດ້ວຍຄວາມຕ້ອງການ: ຄົນເຈັບເປັນ, ຄົນຂາດປັດຈັຍພື້ນຖານ, ຄົນທີ່ບໍ່ສາມາດລ້ຽງຄອບຄົວໄດ້, ແລະ ອື່ນໆອີກ. ພວກເຮົາບໍ່ສາມາດຕອບສນອງຄວາມຕ້ອງການທຸກໆຢ່າງ, ແຕ່ພວກເຮົາກໍສາມາດເຮັດຢ່າງໃດຢ່າງນຶ່ງໄດ້ ແລະພວກເຮົາເຮັດໄດ້ໃນພຣະນາມພຣະເຢຊູ.

***ຄວາມຮູ້ສຶກຫຍັງແດ່ທີ່ທ່ານໄດ້ສໍາຜັດ ເມື່ອທ່ານພົບຄົນທີ່ມີຄວາມຕ້ອງການ ?***

**2. ມັດທາຍ 25:37-40 :**
*37 ເມື່ອນັ້ນ ບັນດາພວກສິນທັມຈະທູນວ່າ 'ພຣະອົງເຈົ້າເອີຍ, ພວກຂ້າພຣະອົງໄດ້ເຫັນພຣະອົງຊົງຢາກເຂົ້າ ຫຼື ຫິວນໍ້າ*
*ແລ້ວໄດ້ຈັດມາຖວາຍພຣະອົງເມື່ອໃດ. 38 ພວກຂ້າພຣະອົງໄດ້ເຫັນພຣະອົງຊົງເປັນແຂກບ້ານ ແລະ ໄດ້ຕ້ອນຮັບໄວ້*
*ຫຼືຊົງເປືອຍພຣະກາຍແລ້ວໄດ້ເອົາເຄື່ອງມາໃຫ້ທົງເມື່ອໃດ. 39ພວກຂ້າພຣະອົງໄດ້ເຫັນພຣະອົງຊົງປະຊວນຢູ່ ຫຼືຢູ່ໃນ*
*ຄຸກ ແລະໄດ້ມາເຝົ້າພຣະອົງເມື່ອໃດ. 40ຝ່າຍພຣະມະຫາກະສັດຈະຊົງຕອບວ່າ 'ເຮົາບອກທ່ານຕາມຄວາມຈິງວ່າ ທີ່*
*ພວກທ່ານໄດ້ເຮັດການເຫຼົ່ານີ້ ແກ່ຜູ້ຕໍ່າຕ້ອຍທີ່ສຸດຄົນນຶ່ງ ໃນພວກພີ່ນ້ອງຂອງເຮົານີ້ ກໍໄດ້ເຮັດໃຫ້ເຮົາເໝືອນກັນ.'*

ພວກເຮົາເຄີຍແນມເຫັນຄົນທີ່ດີ້ນລົນເພາະເຂົາຂາດເຂີນສິ່ງຕ້ອງການຂັ້ນພື້ນຖານບາງຢ່າງ. ແຕ່ພຣະເຢຊູບໍ່ໄດ້ເວົ້າເຖິງຄົນພວກອື່ນ; ພຣະອົງກໍາລັງກ່າວເຖິງພຣະອົງເອງ. ພຣະອົງຊົງເປັນຄົນທີ່ຫິວ. ພຣະອົງຊົງເປັນຜູ້ຢູ່ໃນຄຸກ. ພຣະອົງຊົງແມ່ນຜູ້ເຈັບປ່ວຍ. ທ່ານຈະມັກໃນການຕອບຮັບຂອງຝູງແກະ ພວກຊຶ່ງພຣະອົງຊົງເອີ້ນໃນປະຈຸບັນນີ້ວ່າ "ຄົນຊອບທັມ." ເຂົາເຈົ້າຕົກຕະລຶງ! ເຂົາເຈົ້າບໍ່ເຄີຍຖອຍໃນການເຂົ້າພົບພຣະເຢຊູໃນສະຖານະການທີ່ເລວຮ້າຍ. ເຂົາເຈົ້າບໍ່ໄດ້ປະຕິເສດການຊ່ວຍເຫຼືອຄົນອື່ນ; ເຂົາເຈົ້າບໍ່ທໍ້ຖອຍໃນການເຂົ້າພົບພຣະເຢຊູທີ່ຢູ່ຖ້າມກາງເຂົາເຈົ້າ.

ແລ້ວເປັນຫຍັງເຂົາເຈົ້າຈຶ່ງຊ່ວຍ? ເຂົາເຈົ້າເຫັນຄວາມຕ້ອງການຂອງຄົນອື່ນ. ເພາະວ່າລັກສະນະຂອງເຂົາເຈົ້າຕົງກັນກັບພຣະລັກສະນະຂອງພຣະເຢຊູ ເຂົາເຈົ້າບໍ່ໃຫ້ມີຄວາມຄິດອະຄະຕິຕໍ່ຜູ້ທີ່ຕ້ອງການໆ ຊ່ວຍເຫລືອ; ເຂົາເຈົ້າແນມເຫັນແຕ່ຄົນທີ່ມີຄວາມຕ້ອງການຄວາມຊ່ວຍເຫລືອ, ແລະເຂົາເຈົ້າກໍໄດ້ເລືອກເຮັດຢ່າງໃດຢ່າງນຶ່ງເພື່ອຕອບສນອງຕໍ່ຄວາມຕ້ອງການຂອງຄົນເຫລົ່ານັ້ນ.

ເປັນຕາຕົກຕະລຶງຕໍ່ຄົນຊອບທັມ ເມື່ອພຣະເຢຊູຕອບເຂົາເຈົ້າດ້ວຍຖ້ອຍຄໍາທີ່ແຂງແຮງ ໃນຄໍາອຸປມາວ່າ: *"ເຮົາບອກທ່ານຕາມຄວາມຈິງວ່າ ທີ່ພວກທ່ານໄດ້ເຮັດການເຫຼົ່ານີ້ ແກ່ຜູ້ຕໍ່າຕ້ອຍທີ່ສຸດຄົນນຶ່ງ ໃນພວກພີ່ນ້ອງຂອງເຮົານີ້ ກໍໄດ້ເຮັດໃຫ້ເຮົາເໝືອນກັນ."* ຜູ້ເປັນພໍ່ແມ່ເຂົ້າໃຈໃນເຣື່ອງນີ້ດີ. ຖ້າພວກທ່ານຢາກເຮັດຫຍັງໃຫ້ຂ້ອຍ ຂໍໃຫ້ທ່ານຊ່ວຍລູກຂ້ອຍສາ. ໃນເມື່ອທ່ານກ້າວເຂົ້າມາໃນຊີວິດລູກຂອງຂ້ອຍຄົນໃດຄົນນຶ່ງ ແລະຊ່ວຍເຂົາຫຼີກເວັ້ນຈາກບັນຫາ, ຈິ່ງຮຽນຮູ້ປະສົບການຫຼືເຮັດໜ້າທີ່ຂອງທ່ານ ກໍຈະເປັນການຂອບໃຈຢ່າງສູງ!

ເຄິ່ງທີສອງຂອງຄໍາອຸປມາ(ຂໍ້ 41-46) ກໍມີລັກສະນະດຽວກັບເຄິ່ງທີນຶ່ງ, ແຕ່ກ່ຽວຂ້ອງກັບ "ຝູງແບ້." ຄົນເຫຼົ່ານີ້ບໍ່ໄດ້ເຮັດຈັກສິ່ງດັ່ງທີ່ພວກຄົນຊອບທັມໄດ້ເຮັດ. ເຂົາເຈົ້າໄດ້ສະແດງອອກອຸປນິສັຍທີ່ແຕກຕ່າງຢ່າງສິ້ນເຊີງໃນທ່າທີຕອບສນອງຂອງເຂົາເຈົ້າຕໍ່ສິ່ງຕ່າງໆ ທີ່ພຣະຄຣິດໄດ້ກ່າວມານັ້ນ ຄືສິ່ງທີ່ຄົນຊອບທັມໄດ້ຊ່ວຍເຫຼືອດ້ວຍໃຈຮັກ, ການປະພຶດຂອງພວກຄົນອະທັມຈຶ່ງຖືກຕີຣາຄາ. ເຂົາເຈົ້າຊ່ວຍຄົນອື່ນພຽງແຕ່ເວລາມີຜົນພອຍໄດ້ແກ່ເຂົາເທົ່ານັ້ນ. ແນ່ນອນເຂົາເຈົ້າຊ່ວຍພຣະເຢຊູກໍເພື່ອເອົາຊນະການຍອມຮັບຂອງພຣະເຈົ້າ, ເຂົາເຈົ້າບໍ່ຮູ້ວ່າພຣະອົງມີຄວາມຕ້ອງການຫລືບໍ່, ແຕ່ການຊ່ວຍ "ຄົນຕໍ່າຕ້ອຍທີ່ສຸດ" ເຫລົ່ານີ້ຈຶ່ງບໍ່ຄຸ້ມຄ່າເວລາຂອງເຂົາເຈົ້າ.

***ດ້ວຍວ່າມີຄວາມຕ້ອງການມາກມາຍບໍ່ພຽງແຕ່ໃນຊຸມຊົນຂອງເຮົາໄປ, ພວກເຮົາຈະຕັດສິນໃຈຊ່ວຍຜູ້ໃດ ຢ່າງໃດ?***

ແນ່ນອນ ສິ່ງທີ່ໜ້າຢ້ານຕໍ່ບັນດາຄົນທີ່ພຣະອົງຈັດໄວ້ເບື້ອງຊ້າຍຂອງພຣະອົງນັ້ນ, ອົງພຣະຜູ້ເປັນເຈົ້າຕອບວ່າ: *"ເຮົາບອກສູຕາມຄວາມຈິງວ່າ ທີ່ສູບໍ່ໄດ້ເຮັດການເຫຼົ່ານີ້ ແກ່ຜູ້ຕໍ່າຕ້ອຍທີ່ສຸດໃນພວກນີ້ ພວກສູກໍບໍ່ໄດ້ເຮັດແກ່ເຮົາ ເໝືອນກັນ. ແລ້ວພວກເຫຼົ່ານີ້ຈະອອກໄປສູ່ໂທດອັນຕລອດໄປເປັນນິດ" (ຂໍ້45-46).*

ພຣະເຢຊູອ້າງເຖິງ " ຜູ້ຕໍ່າຕ້ອຍທີ່ສຸດໃນບັນດາອ້າຍນ້ອງຂອງເຮົາ." ຄົນເຫຼົ່ານີ້ແມ່ນອ້າຍນ້ອງຝ່າຍວິນຍານ, ແນ່ນອນ, ພວກນີ້ກໍແມ່ນອ້າຍນ້ອງຂອງເຮົາໃນພຣະຄຣິດເໝືອນກັນ. ສິ່ງນີ້ໃກ້ຄຽງກັບສິ່ງທີ່ພຣະເຢຊູເວົ້າກ່ອນໜ້ານີ້ ໃນພຣະທັມມັດທາຍວ່າ: *" ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າ ຖ້າຜູ້ໃດເອົານໍ້າເຢັນແຕ່ຈອກດຽວ ໃຫ້ແກ່ຄົນເລັກນ້ອຍຜູ້ນຶ່ງໃນຈຳພວກນີ້ດື່ມ ເພາະເປັນສິດ, ຜູ້ນັ້ນຈະບໍ່ຂາດບຳເໜັດຂອງຕົນຈັກເທື່ອ" (ມທ 10:42).*

ຖານະທີ່ເປັນຄຣິສຕຽນພວກເຮົາເປັນຄອບຄົວ! ຕລອດພຣະຄັມພີໃໝ່, ຜູ້ທີ່ເຊື່ອໃນຄຣິດຕະຈັກຖືວ່າເປັນອ້າຍ(ເປັນນ້ອງ)ກັນ. ພຣະເຢຊູກ່າວວ່າ: *" ດ້ວຍວ່າຜູ້ໃດຈະເຮັດຕາມນໍ້າພຣະທັຍພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນ ຜູ້ນັ້ນແຫຼະ ເປັນນ້ອງຊາຍ, ເປັນນ້ອງສາວ, ແລະ ເປັນມານດາຂອງເຮົາ" (ມທ 12:50).* ນີ້ເປັນຄຳພະຍານຍິ່ງໃຫຍ່ ຕໍ່ຄວາມເຊື່ອມໂຍງຂອງເຮົາກັບພຣະຄຣິດໃນເວລາພວກເຮົາ ຄຣິສຕະຈັກ ອ້າຍແລະນ້ອງໃນພຣະຄຣິດຮັກ ແລະເບິ່ງແຍງຊຶ່ງກັນແລະກັນ. *"ຖ້າເຈົ້າທັງຫຼາຍມີຄວາມຮັກຊຶ່ງກັນແລະກັນ ດັ່ງນີ້ແຫຼະ, ຄົນທັງປວງຈະໄດ້ຮູ້ວ່າ ເຈົ້າທັງຫຼາຍເປັນສາວົກຂອງເຮົາ" (ຢຮ 13:35).*

ນີ້ໝາຍຄວາມວ່າພວກເຮົາບໍ່ຕ້ອງຕອບສນອງຕໍ່ຄວາມຕ້ອງການຂອງຄົນພາຍນອກໂບດບໍ່? ບໍ່! ຄວາມຮັກຂອງເຮົາທີ່ພຣະເຢຊູບອກແມ່ນໃຫ້ເຮົາຮັກຜູ້ອື່ນທັງໃນແລະນອກໂບດ. ລັກສະນະນະຂອງເຮົາໃນພຣະຄຣິດບົ່ງບອກຢູ່ທີ່ເຮົາສະແດງອອກໂດຍການດຳຣົງຊີວິດ ແລະຮັບໃຊ້ຢ່າງໃດໃນຊຸມຊົນ: ໜຶ່ງ, ໃນຊຸມຊົນຄວາມເຊື່ອ, ແລະທີສອງ, ໃນຊຸມຊົນທີ່ນອກຄວາມເຊື່ອ.

ເວົ້າຫຍໍ້, ເຮົາມາພາກັນຮັບໃຊ້ພຣະຄຣິດໂດຍການຮັບໃຊ້ຜູ້ອື່ນເທາະ!

***ແມ່ນຫຍັງທີ່ພວກເຮົາຈະເຮັດເປັນກຸ່ມເພື່ອຮັບໃຊ້ພຣະເຢຊູໂດຍການຮັບໃຊ້ "ຜູ້ຕໍ່າຕ້ອຍທີ່ສຸດເຫຼົ່ານີ້ ?***

## ນຳໃຊ້ໃນຊີວິດ

ແມ່ນຫຍັງທີ່ທ່ານສາມາດເຮັດໃນອາທິດນີ້ ເພື່ອຮັບໃຊ້ພຣະຄຣິດດ້ວຍການຮັບໃຊ້ຜູ້ອື່ນ? ຈົ່ງພິຈາຣະນາຄຳແນະນຳຕໍ່ໄປນີ້ ເພື່ອເປັນຈຸດເລີ້ມຕົ້ນ:

- **ເລີ້ມສິ່ງນ້ອຍໆ.** ທ່ານຈະພົບຜູ້ໃດຜູ້ນຶ່ງທີ່ຕ້ອງການຄວາມຊ່ອຍເຫຼືອໃນອາທິດນີ້. ມັນອາດຈະເປັນສິ່ງເລັກນ້ອຍ, ແຕ່ຈົ່ງກ້າວເຂົ້າໄປ ແລະຊ່ອຍ ແລະໃຫ້ເຮັດໄປໂດຍປາສຈາກການຕິຕຽນ ບໍ່ວ່າຜູ້ນັ້ນຈະສົມຄວນໄດ້ຮັບຫຼືບໍ່.
- **ເຮັດນຳກັນ.** ເປັນກຸ່ມ, ຈົ່ງບົ່ງບອກຄວາມຕ້ອງການໃນກຸ່ມຂອງທ່ານ ຫຼືໃນໂບດ ແລະວາງຍຸດທະວິທີຊ່ອຍເຫຼືອບຸກຄົນນັ້ນ ຫຼືຄອບຄົວນັ້ນ ຜ່ານຜ່າຄວາມຫຍຸ້ງຍາກຕ່າງໆທີ່ເຂົາເຈົ້າປະເຊີນຢູ່.
- **ເຂົ້າຮ່ວມ.** ຈົ່ງຊອກຫາທາງໃຫ້ໂບດຂອງທ່ານໄດ້ຮັບໃຊ້ ແລະປະກາດແກ່ຜູ້ທີ່ຕ້ອງການທັງຄອບຄົວໃນໂບດແລະນອກໂບດ. ທຸ້ມເທເວລາ ແລະເຫື່ອແຮງໃສ່ພັນທະກິດອັນໃດອັນນຶ່ງຂອງໂບດ ໃຊ້ເວລາຍາວນານ.

ທ່ານອາດບໍ່ໄດ້ຢູ່ໃນຊຸມຊົນທີ່ດີທີ່ສຸດຂອງເຂດເມືອງ ອີງຕາມລາຍຊື່ໃນບາງບັນຊີ. ແຕ່ທ່ານຢູ່ໃນບ່ອນທີ່ເຕັມໄປດ້ວຍຄວາມຕ້ອງການ. ສະນັ້ນ ທ່ານມີໂອກາດຮັບໃຊ້ພຣະເຢຊູ ອົງພຣະຜູ້ເປັນເຈົ້າຂອງທ່ານຢ່າງມາກມາຍ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**